**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4645/ກປ
ນະຄອນຫຼວງວຽງຈັນ, ວັນທີ 11 SEP 2024

# ຂໍ້ຕົກລົງ
# ວ່າດ້ວຍ ຜະລິດຕະພັນໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 4557/ກປມ, ລົງວັນທີ 21 ສິງຫາ 2024;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 3416/ຫກ, ລົງວັນທີ 03 ກັນຍາ 2024.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ປະເພດ, ຊະນິດ, ຮູບແບບ ແລະ ຂະໜາດ ຂອງຜະລິດຕະພັນໄມ້ ເພື່ອເປັນບ່ອນອີງ ໃນການຄຸ້ມຄອງ ແລະ ສົ່ງເສີມການປຸງແຕ່ງໄມ້ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ ແນໃສ່ຮັບປະກັນໃຫ້ຜະລິດຕະພັນໄມ້ໄດ້ມາດຕະຖານ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດໃຫ້ເຂັ້ມແຂງ.

### ມາດຕາ 2 ຜະລິດຕະພັນໄມ້

ຜະລິດຕະພັນໄມ້ ແມ່ນ ຜະລິດຕະພັນທີ່ໄດ້ຈາກການນຳເອົາວັດຖຸດິບ ທີ່ໄດ້ຜ່ານຂັ້ນຕອນ ຫຼື ຂະບວນການຜະລິດຂອງໂຮງງານປຸງແຕ່ງໄມ້ ເພື່ອປ່ຽນແປງຈາກສະພາບເດີມໄປສູ່ຜະລິດຕະພັນໃໝ່ ທີ່ສາມາດສະໜອງແກ່ການຊົມໃຊ້ ຫຼື ເປັນສິນຄ້າຈຳໜ່າຍ ທີ່ໄດ້ກຳນົດລະອັດເຄົ້າຂອງສາລະບານພາສີ ຕາມລາຍການ ແລະ ຂະໜາດຜະລິດຕະພັນໄມ້ ແຕ່ລະປະເພດ, ຊະນິດ ແລະ ຮູບແບບ, ຊຶ່ງໄດ້ກຳນົດ ຄວາມໜາ, ກວ້າງ ແລະ ຄວາມຍາວ.

ຜະລິດຕະພັນໄມ້ ປະກອບມີ ສາມ (3) ປະເພດ ດັ່ງນີ້:

1. ຜະລິດຕະພັນໄມ້ ເລື່ອຍແປຮູບ;
2. ຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ;
3. ຜະລິດຕະພັນໄມ້ ສຳເລັດຮູບ.

### ມາດຕາ 3 ຜະລິດຕະພັນໄມ້ ເລື່ອຍແປຮູບ

ຜະລິດຕະພັນໄມ້ ເລື່ອຍແປຮູບ ແມ່ນ ຜະລິດຕະພັນໄມ້ ທີ່ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງຂັ້ນໜຶ່ງ ຄື: ໄມ້ຕິຕັບ, ໄມ້ແປຮູບ ແລະ ໄມ້ຊອຍ ທີ່ມີຂະໜາດ ຄວາມໜາ, ກວ້າງ ແລະ ຄວາມຍາວ ຕາມຄວາມຕ້ອງການຂອງການຊົມໃຊ້ ທີ່ແຕກຕ່າງກັນ ຊຶ່ງປະກອບມີ ສາມ (3) ຊະນິດ ດັ່ງນີ້:

1. ໄມ້ຕິຕັບ ແມ່ນໄມ້ເລື່ອຍ ທີ່ໄດ້ມາຈາກໄມ້ທ່ອນ ສາມາດນຳໄປປຸງແຕ່ງ ເປັນຜະລິດຕະພັນ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບໄດ້;

2. ໄມ້ແປຮູບ ແມ່ນໄມ້ເລື່ອຍ ທີ່ເອົາໄມ້ຕີຕັບມາເລື່ອຍ ໃຫ້ມີຂະໜາດຕ່າງໆ ທີ່ນ້ອຍກວ່າຂະໜາດໄມ້ຕີຕັບ;

3. ໄມ້ຊອຍ ແມ່ນໄມ້ເລື່ອຍ ທີ່ມີຂະໜາດນ້ອຍ ທີ່ໄດ້ຈາກການຊອຍໄມ້ແປຮູບ, ປີກໄມ້ ແລະ ງ່າໄມ້.

ຜະລິດຕະພັນໄມ້ ເລື່ອຍແປຮູບ ແຕ່ລະຊະນິດ ປະກອບມີລະຫັດເຄົ້າ, ຊື່ເປັນພາສາລາວ, ຊື່ເປັນພາສາອັງກິດ ແລະ ຂະໜາດສະເພາະ ດັ່ງນີ້:

| ລະຫັດເຄົ້າ Heading | ລາຍການຜະລິດຕະພັນໄມ້ ເລື່ອຍແປຮູບ ( Sawn wood product) | | ຂະໜາດ(ຊມ) Size (cm) | | |
|---|---|---|---|---|---|
| | ຊື່ເປັນພາສາລາວ | English | ໜາ/ Thick | ກວ້າງ/ Wide | ຍາວ/ Length |
| 44.07 | 1. ໄມ້ຕີຕັບ (ໄມ້ເລື່ອຍຂະໜາດໃຫຍ່) | 1. Big size sawed timber | ≥10 | ---- | ≤800 |
| | **2. ໄມ້ແປຮູບ** | 2. General type of sawed timber | | | |
| | 2.1 ໄມ້ 4 x 8 | | 4 | 8 | ≤800 |
| | 2.2 ໄມ້ 5 x 10 | | 5 | 10 | ≤800 |
| | 2.3 ໄມ້ 5 x 12 | | 5 | 12 | ≤800 |
| | 2.4 ໄມ້ 5 x 15 | | 5 | 15 | ≤800 |
| | 2.5 ໄມ້ 6 x 12 | | 6 | 12 | ≤800 |
| | 2.6 ໄມ້ 6 x 18 | | 6 | 18 | ≤800 |
| | 2.7 ໄມ້ 6 x 20 | | 6 | 20 | ≤800 |
| | 2.8 ໄມ້ 2 x 30 | | 2 | 30 | ≤800 |
| | 2.9 ໄມ້ 3 x 30 | | 3 | 30 | ≤800 |
| | 2.10 ໄມ້ທີ່ຈະປຸງແຕ່ງ ເສົາເຮືອນ | | 15-30 | 15-30 | ≤800 |
| | 2.11 ໄມ້ແປຮູບທີ່ຈະປຸງແຕ່ງ ເປັນທຸກຊະນິດ | | 1-5 | 5-100 | ≤800 |
| 44.08 | **3. ໄມ້ຊອຍ** | 3. Spited wood | | | |
| | 3.1 ໄມ້ຮູບປະພັນທຸກຊະນິດ | 3.1 formulated sawn woods | ≤5 | ≤7 | ≤800 |
| | 3.2 ໄມ້ 3 x 3 | | 3 | 3 | ≤800 |
| | 3.3 ໄມ້ 4 x 4 | | 4 | 4 | ≤800 |
| | 3.4 ໄມ້ 3 x 5 | | 3 | 5 | ≤800 |
| | 3.5 ໄມ້ 3 x 6 | | 3 | 6 | ≤800 |
| | 3.6 ໄມ້ 3 x 7 | | 3 | 7 | ≤800 |
| | 3.7 ໄມ້ 3 x 8 | | 3 | 8 | ≤800 |
| | 3.8 ໄມ້ເສັ້ນນ້ອຍທຸກຊະນິດ | | ≤2 | ≤4 | ≤800 |

ລາຍການຜະລິດຕະພັນໄມ້ ເລື່ອຍແປຮູບ ໄດ້ມີຮູບພາບຄັດຕິດຢູ່ໃນເອກະສານຊ້ອນທ້າຍ ທີ 1 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 4 ຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ

ຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ ແມ່ນ ຜະລິດຕະພັນໄມ້ ທີ່ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງຂັ້ນສອງ ຕໍ່ຈາກຂັ້ນໜຶ່ງ ທີ່ຜ່ານຂະບວນການ ອົບ ຫຼື ຕາກແດດ, ຕັດຂະໜາດ, ຂຶ້ນຮູບ, ປາດໂຄ້ງ, ກົບ, ຂັດ ແລະ ອື່ນໆ ແຕ່ບໍ່ສາມາດ ແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ (Knock-down) ຕາມການອອກແບບເປັນໜຶ່ງຊຸດ ຫຼື ໜຶ່ງຫຼັງ, ບໍ່ທັນນຳໃຊ້ໄດ້ເລີຍ.

ຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ ປະກອບດ້ວຍ ໄມ້ປອກ ຫຼື ໄມ້ຝານ, ໄມ້ສຳລັບການກໍ່ສ້າງ, ໄມ້ປະກອບໃນອາຄານ ແລະ ຜະລິດຕະພັນໄມ້ ເຄິ່ງສຳເລັດຮູບອື່ນໆ ທີ່ມີຂະໜາດ ແລະ ຮູບແບບຄ້າຍຄືກັບຜະລິດຕະພັນໄມ້ ສຳເລັດຮູບໃດໜຶ່ງ ເຊັ່ນ ຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ ທີ່ມີຂະໜາດ ແລະ ຮູບແບບຄ້າຍຄືກັບເຄື່ອງເຟີນີເຈີສຳເລັດຮູບ ຊຶ່ງຜະລິດຕະພັນໄມ້ດັ່ງກ່າວ ບໍ່ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ (Knock-down) ຕາມການອອກແບບເປັນ ໜຶ່ງຊຸດ ຫຼື ໜຶ່ງຫຼັງ, ຕ້ອງໄດ້ປຸງແຕ່ງຕື່ມ ຈຶ່ງຈະເປັນຜະລິດຕະພັນໄມ້ສຳເລັດຮູບ ຫຼື ປະກອບເຂົ້າກັນ ເປັນຜະລິດຕະພັນສຳເລັດຮູບ ເຊັ່ນ: ຊິ້ນສ່ວນ ປະກອບຂອງເຄື່ອງເຟີນີເຈີ (ສະໂລ່ງ/ໂຊຟາ, ໂຕະ, ຕັ່ງ, ຕຽງ, ຕູ້), ຖັງລົດ, ໄມ້ປັກເກ ແລະ ໄມ້ປູພື້ນ.

ຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ ປະກອບມີ ສອງ (2) ຮູບແບບ ດັ່ງນີ້:

1. ຮູບແບບເປັນໜ່ວຍ ຫຼື ເປັນຊຸດເຄິ່ງສຳເລັດຮູບ ທີ່ບໍ່ສາມາດນຳໃຊ້ໄດ້ເລີຍ, ບໍ່ສາມາດປະກອບເຂົ້າກັນເປັນໜ່ວຍ ຫຼື ເປັນຊຸດໄດ້ເລີຍ ເຊັ່ນ: ຕູ້, ໂຕະ ຕັ່ງ, ຕຽງ ແລະ ອື່ນໆ;
2. ຮູບແບບເປັນຊິ້ນສ່ວນ ທີ່ບໍ່ສາມາດນຳໃຊ້ໄດ້ເລີຍ ເຊັ່ນ: ເຄື່ອງປະກອບຖັງລົດ, ໄມ້ປັກເກ, ໄມ້ເຊື່ອມ ຕໍ່ປະສານ, ຂາ, ຂາງ, ແປ້ນໜ້າ, ຢ່ອງຈັບຂອງຕູ້, ໂຕະ, ຕັ່ງ, ຕຽງ ແລະ ອື່ນໆ.

ຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ ແຕ່ລະຊະນິດ ປະກອບມີລະຫັດເຄົ້າ, ຊື່ເປັນພາສາລາວ, ຊື່ເປັນພາສາອັງກິດ ແລະ ຂະໜາດສະເພາະ ດັ່ງນີ້:

| ລະຫັດເຄົ້າ Heading | ລາຍການຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ (Semi Wood Product) | | ຂະໜາດ(ຊມ) Maximum Size (cm) | | |
|---|---|---|---|---|---|
| | **ຊື່ເປັນພາສາລາວ** | **English** | **ໜາ/ Thick** | **ກວ້າງ/ Wide** | **ຍາວ/ Length** |
| **44.01** | **1. ໄມ້ບົດ ຫຼື ໄມ້ສັບ** | **1. Wood chips** | - | - | - |
| **44.08** | **2. ໄມ້ປອກ ຫຼື ໄມ້ຝານ** | **2. Veneer and slicingboard** | | | |
| | • ໄມ້ປອກ | • Veneer | ≤0.6 | ≤ 150 | ≤ 300 |
| | • ໄມ້ຝານ | • slicing board | ≤0.3 | ≤ 150 | ≤ 300 |
| **44.09** | **3. ຜະລິດຕະພັນເຄິ່ງສຳເລັດຮູບທີ່ມີຂະໜາດ ແລະ ຮູບແບບຄ້າຍຄືໄມ້ປັກເກ, ໄມ້ປູພື້ນ, ໄມ້ປະກອບຖັງລົດ** | **3. Parquet, wood flooring and truck body joinery** | | | |
| | **3.1 ໄມ້ປັກເກ** | **3.1 Parquet floorings** | | | |
| | • ໄມ້ປັກເກປູພື້ນ ແລະ ປັກເກ ອື່ນໆ | • Parquet/ random flooring | ≤ 3 | ≤ 15 | ≤ 120 |
| | • ໄມ້ປູພື້ນແບບຕໍ່ເສັ້ນ-ຕໍ່ແຜ່ນທຸກຊະນິດ | • F JL flooring | ≤ 3 | ≤ 20 | ≤ 650 |
| | • ໄມ້ປູພື້ນແບບໂມເສດ | • Mosaic Pa.Fl. | ≤ 3 | ≤ 15 | ≤ 30 |
| | **3.2 ໄມ້ປູພື້ນ** | **3.2 Wood flooring** | | | |
| | • ໄມ້ປູພື້ນແບບດ້ານໜຶ່ງມີຮ່ອງກັນມື່ນ | • ULIN decking | ≤ 3 | ≤ 20 | ≤ 650 |
| | • ໄມ້ປູພື້ນແບບໜ້າລຽບ | • ELO decking | ≤ 3 | ≤ 20 | ≤ 650 |
| | • ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງຮອບຕົວ | • Tongue and grove flooring | ≤ 3 | ≤ 20 | ≤ 650 |
| | • ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງປະສົມ | • Tongue and grove lamin flooring | ≤ 3 | ≤ 20 | ≤ 650 |
| | **3.3 ໄມ້ປະກອບຖັງລົດ** | **3.3 Truck body joiner** | | | |
| | • ໄມ້ຂາງ | • Cross bearer | ≤ 10 | ≤ 15 | ≤ 250 |
| | • ແປ້ນປູພື້ນ | • Truck's floorings | ≤ 5 | ≤ 15 | ≤ 650 |
| | • ຝາຂ້າງ | • Gate boards | ≤ 5 | ≤ 15 | ≤ 300 |
| **44.12** | **4. ໄມ້ເຊື່ອມຕໍ່ປະສານ** | **3. Laminated Wood** | - | - | - |
| **44.18** | **5. ໄມ້ສຳລັບການກໍ່ສ້າງ** | **5. Builder's Carpentry and Construction** | | | |
| | **5.1 ໄມ້ໂຄງຫຼັງຄາ** | **5.1 Roof structure** | | | |
| | • ໄມ້ອິກໄກ່ | • Wooden roof | 5 | 20 | ≤ 800 |
| | • ໄມ້ໂຄງເພດານ | • Ceiling frame | 5 | 10 | ≤ 800 |
| | • ໄມ້ຂື່ວ | • Roof beams | 5 | 10 | ≤ 800 |
| | • ໄມ້ສີຍົວ | • Purlin prop | 5 | 15 | ≤ 800 |
| | • ໄມ້ຂັດແປ | • Struts | 5 | 10 | ≤ 800 |
| | • ໄມ້ເສົາດັ້ງ | • King post | 5 | 15 | ≤ 800 |
| | • ໄມ້ປ້ານລົມ, ປ້ານຊາຍ | • Rafter | 3 | 25 | ≤ 800 |
| | • ໄມ້ຂື່ | • Anti slip block | 5 | 20 | ≤ 800 |
| | • ໄມ້ຄໍສອງ | • Top plate of wall | 5 | 20 | ≤ 800 |
| | 5.2 ໄມ້ເສົາໃຊ | 5.2. Column | 30 | 30 | ≤ 800 |
| | 5.3 ໄມ້ຂາງໜີບ | 5.3 Mounding | 5 | 20 | ≤ 800 |
| | 5.4 ໄມ້ແປ້ນພື້ນ | 5.4 Lumber | 3 | 30 | ≤ 800 |

| | | | | | |
|---|---|---|---|---|---|
| | 5.5 ໄມ້ແປ້ນແອ້ມ | 5.5 Flooring | 2 | 20 | ≤ 800 |
| | 5.6 ໄມ້ຕົງ | 5.6 Rafter | 5 | 10 | ≤ 800 |
| | 5.7 ໄມ້ຂາງ | 5.7 Beam | 5 | 20 | ≤ 800 |
| | **6. ໄມ້ປະກອບອາຄານ (ຊິ້ນສ່ວນ)** | 6. Builder's carpentry and Joinery | | | |
| | **6.1 ຊຸດ ປະຕູ (ຊິ້ນສ່ວນ)** | **6.1 Door and Joinery** | | | |
| | • ໄມ້ວົງກົບປະຕູ | • Door frame | ≤ 15 | ≤ 20 | ≤ 300 |
| | • ໄມ້ບານປະຕູ | • Panel of door | ≤ 5 | ≤ 150 | ≤ 300 |
| | • ໄມ້ຂອບບານປະຕູ | • Door pa nel Frame | ≤ 5 | ≤ 20 | ≤ 300 |
| | **6.2 ຊຸດ ປ່ອງຢ້ຽມ (ຊິ້ນສ່ວນ)** | **6.2 Window and Joinery** | | | |
| | • ໄມ້ວົງກົບປ່ອງຢ້ຽມ | • Window frame | ≤15 | ≤ 20 | ≤ 300 |
| | • ໄມ້ບານປ່ອງຢ້ຽມ | • Window panel | ≤ 5 | ≤ 150 | ≤ 300 |
| | • ໄມ້ຂອບບານປ່ອງຢ້ຽມ | • Window Panel Frame | ≤ 5 | ≤ 20 | ≤ 300 |
| | 6.3 ລູກຕົ່ງ | 6.3 Window piral stair | ≤ 20 | ≤ 20 | ≤ 150 |
| | 6.4 ໄມ້ຂອບ, ຄິ້ວ, ສາຍບົວ | 6.4 Molding | ≤ 3 | ≤ 15 | ≤ 650 |
| | 6.5 ແມ່ຂັ້ນໄດ | 6.5 Staircase | ≤ 10 | ≤ 30 | ≤ 600 |
| | 6.6 ແປ້ນຂັ້ນໄດຕົວນອນ | 6.6 Tread | ≤ 5 | ≤ 30 | ≤ 200 |
| | 6.7 ແປ້ນຂັ້ນໄດຕົວຕັ້ງ | 6.7 Riser | ≤ 3 | ≤ 20 | ≤ 200 |
| | 6.8 ຣາວພະນັກ, ຣາວຂັ້ນໄດ | 6.8 Railling | ≤ 6 | ≤ 15 | ≤ 600 |
| **94.01** | **7. ຜະລິດຕະພັນໄມ້ເຄິ່ງສໍາເລັດຮູບ ທີ່ມີຂະໜາດ ແລະ ຮູບແບບຄ້າຍຄື ເຟີນີເຈີສໍາເລັດຮູບ** | **7. Semi wood product Furniture** | | | |
| | **7.1 ຊຸດ ສະໂລ່ງ/ໂຊຟາໄມ້** | **7.1 Sofar** | | | |
| | • ຂາ | • Legs | ≤ 15 | ≤ 15 | ≤ 100 |
| | • ຂາງ | • Beams | ≤ 5 | ≤ 20 | ≤ 250 |
| | • ແປ້ນໜ້າ | • Boards | ≤ 5 | ≤ 65 | ≤ 250 |
| | **7.2 ຊຸດ ຕັ່ງໄມ້** | • **7.2 Chairs** | | | |
| | • ຂາຫຼ່ຽມ | • Legs (square) | ≤ 15 | ≤ 15 | ≤ 150 |
| | • ຂາກົມ | • Legs (round) | ≤ 20 | ≤ 20 | ≤ 150 |
| | • ຂາງ | • Beams | ≤ 5 | ≤ 15 | ≤ 250 |
| | • ແປ້ນໜ້າ | • Boards | ≤ 5 | ≤ 50 | ≤ 250 |
| **94.03** | **8. ຊຸດ ໂຕະໄມ້** | **8. Tables** | | | |
| | • ຂາຫຼ່ຽມ | • Legs (square) | ≤ 15 | ≤ 15 | ≤ 150 |
| | • ຂາກົມ | • Legs (round) | ≤ 20 | ≤ 20 | ≤ 150 |
| | • ຂາງ | • Beams | ≤ 5 | ≤ 15 | ≤ 250 |
| | • ແປ້ນໜ້າ | • Boards | ≤ 5 | ≤ 120 | ≤ 250 |
| | **9. ຊຸດ ຕຽງໄມ້** | **9. Mattress** | | | |
| | • ຂາຕຽງ | • Legs | ≤ 15 | ≤ 15 | ≤ 100 |
| | • ແປ້ນຂາງຕຽງ | • Beams | ≤ 5 | ≤ 40 | ≤ 220 |
| | • ແປ້ນຫົວຕຽງ | • Boards | ≤ 5 | ≤ 60 | ≤ 220 |
| | **10. ຊຸດ ຕູ້ໄມ້** | **10. Cabinets** | | | |
| | • ຂາ | • Legs | ≤ 5 | ≤ 10 | ≤ 300 |
| | • ຂາງ, ໄມ້ເຊັ່ນ | • Beams | ≤ 5 | ≤ 10 | ≤ 300 |
| | • ແປ້ນໜ້າ | • Boards | ≤ 5 | ≤ 60 | ≤ 300 |
| | **11. ເຄື່ອງຕົບແຕ່ງຕ່າງໆ ທີ່ເປັນເຟີນີເຈີ ທີ່ເຮັດດ້ວຍໄມ້** | **11. Decorative at furniture of woods** | ---- | ---- | ---- |

ລາຍການຜະລິດຕະພັນໄມ້ ເຄິ່ງສໍາເລັດຮູບ ໄດ້ມີຮູບພາບຄັດຕິດຢູ່ໃນເອກະສານຊ້ອນທ້າຍ ທີ 2 ຂອງ ຂໍ້ຕົກລົງສະບັບນີ້.

**ມາດຕາ 5 ຜະລິດຕະພັນໄມ້ ສຳເລັດຮູບ**

ຜະລິດຕະພັນໄມ້ສຳເລັດຮູບ ແມ່ນ ຜະລິດຕະພັນໄມ້ ທີ່ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງຂັ້ນສາມ (ຜະລິດຕໍ່ຈາກຂັ້ນສອງ) ເຊັ່ນ: ບາກ, ເຈາະ, ສີ່ວ, ແລ່ນຮ່ອງ, ແລ່ນລີ້ນ, ປາດເດືອຍ, ເຊື່ອມຕໍ່, ຂັດເງົາ, ລົງສີ ຫຼື ຍັງບໍ່ລົງສີ, ເຈາະຮູ, ຈັບນອດ ແລະ ອື່ນໆ ຊຶ່ງສາມາດນຳໃຊ້ໄດ້ເລີຍ ຫຼື ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ດີ (Knock-down) ໂດຍບໍ່ຕ້ອງປຸງແຕ່ງເພີ່ມເຕີມ.

ຜະລິດຕະພັນໄມ້ ສຳເລັດຮູບ ປະກອບມີ ໄມ້ອັດ, ໄມ້ສຳລັບການກໍ່ສ້າງ, ໄມ້ປະກອບໃນອາຄານ, ໄມ້ປັກເກ້ ຫຼື ໄມ້ປູພື້ນ ຫຼື ໄມ້ປະກອບຖັງລົດ, ໄມ້ເຊື່ອມຕໍ່ປະສານ, ພາຊະນະບັນຈຸທີ່ເຮັດດ້ວຍໄມ້, ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້, ເຄື່ອງເຟີນີເຈີ, ເຄື່ອງຫັດຖະກຳໄມ້, ຜະລິດຕະພັນຈາກຂີ້ເລື່ອຍ ແລະ ຜະລິດຕະພັນຖ່ານໄມ້.

ຜະລິດຕະພັນໄມ້ ສຳເລັດຮູບ ປະກອບມີ ສອງ (2) ຮູບແບບ ດັ່ງນີ້:

1. ຮູບແບບທີ່ເປັນໜ່ວຍ ຫຼື ເປັນຊຸດສຳເລັດຮູບ ທີ່ສາມາດນຳໃຊ້ໄດ້ເລີຍ, ສາມາດປະກອບເຂົ້າກັນເປັນໜ່ວຍ ຫຼື ເປັນຊຸດໄດ້ເລີຍ ເຊັ່ນ: ຕູ້, ໂຕະ, ຕັ່ງ, ຕຽງ ແລະ ອື່ນໆ;

2. ຮູບແບບທີ່ເປັນຊິ້ນສ່ວນ ທີ່ສາມາດນຳໃຊ້ໄດ້ເລີຍ ເຊັ່ນ: ເຄື່ອງປະກອບໃນຖັງລົດ, ໄມ້ປັກເກ, ໄມ້ເຊື່ອມຕໍ່ປະສານ, ຂາໂຕະ, ຂາຕັ່ງ, ຂາຕູ້, ແປ້ນຂ້າງ, ແປ້ນໜ້າ, ຍ່ວງຈັບຂອງຕູ້ ແລະ ອື່ນໆ.

ຜະລິດຕະພັນໄມ້ ສຳເລັບຮູບ ແຕ່ລະຊະນິດ ປະກອບມີລະຫັດເຄົ້າ, ຊື່ເປັນພາສາລາວ, ຊື່ເປັນພາສາອັງກິດ ແລະ ຂະໜາດສະເພາະ ດັ່ງນີ້:

| ລະຫັດເຄົ້າ Heading | ລາຍການຜະລິດຕະພັນ (Description) | | ຂະໜາດ (ຊມ) Maximum size (Cm) | | |
|---|---|---|---|---|---|
| | **ຊື່ເປັນພາສາລາວ** | **English** | **ໜາ/ Thick** | **ກວ້າງ/ Wide** | **ຍາວ/ Length** |
| **44.01** | **1. ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ** | **1. Wooden briquettes and pellets** | | | |
| | 1.1 ຂີ້ເລື່ອຍອັດແທ່ງ | 1.1 Wooden briquettes | – | – | – |
| | 1.2 ຂີ້ເລື່ອຍອັດເມັດ | 1.2 Wooden pellets | – | – | – |
| **44.02** | **2. ຜະລິດຕະພັນ ຖ່ານໄມ້** | **2. Wooden charcoal** | | | |
| | 2.1 ຖ່ານຂາວ | 2.1 White charcoal | – | – | – |
| | 2.2 ຖ່ານ ອັດແທ່ງ ຫຼື ອັດເມັດ | 2.2 Sawdust charcoal | – | – | – |
| | 2.3 ຖ່ານຄາບອນທີ່ມີລັກສະນະກະຕຸ້ນໃຫ້ມີພາວະກຳມັນຕະພາບລັງສີ ຫຼື ຖ່ານກັ່ນຕອງດູດຊຶມ | 2.3 Activated carbon | – | – | – |
| **44.09** | **3. ຜະລິດຕະພັນໄມ້ປັກເກ້ ແລະ ໄມ້ປູພື້ນ** | **3. Wooden parquets and interior flooring** | | | |
| | **3.1 ຜະລິດຕະພັນໄມ້ ປັກເກ້** | **3.1 parquets** | | | |
| | • ໄມ້ປັກເກ້ ຊິ້ນດຽວ | • Solid parquet | – | – | – |
| | • ໄມ້ປັກເກ້ ເຊື່ອມຕໍ່ປະສານ | • FJL parquet | – | – | – |
| | • ໄມ້ປັກເກ້ ໂມເສດ | • Mosaic parquet | – | – | – |
| | **3.2 ຜະລິດຕະພັນໄມ້ປູພື້ນ** | **3.2 Flooring** | | | |
| | • ໄມ້ປູພື້ນຊິ້ນດຽວ | • Solid/OPC Flooring | – | – | – |
| | • ໄມ້ປູພື້ນແບບເຊື່ອມຕໍ່ | • UNI flooring | – | – | – |
| | • ໄມ້ປູພື້ນແບບເຊື່ອມຕໍ່ອັດປະສານ | • FJL flooring | – | – | – |
| | • ໄມ້ປູພື້ນອັດແບບເປັນຊັ້ນ | • Engineered flooring | – | – | – |
| | • ໄມ້ແຜ່ນພື້ນເດັກກິງ | • Decking tile | – | – | – |
| | • ໄມ້ປູພື້ນແບບດ້ານເທິງມີຮ່ອງກັນມື່ນ | • Reeded Decking | – | – | – |
| | • ໄມ້ປູພື້ນກົບລົບມູມ 4 ດ້ານ | • S4S E4E Decking | – | – | – |
| | 3.3 ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ | 3.3 Wall and ceiling panel | | | |

| | | | | | |
|---|---|---|---|---|---|
| | • ໄມ້ເພດານແບບຮ່ອງ ຫຼື ບໍ່ມີຮ່ອງ | • ceiling panel | – | – | – |
| | • ໄມ້ເພດານແບບເຊື່ອມຕໍ່ປະສານ | • FJL ceiling panel | – | – | – |
| | • ໄມ້ແອ້ມຝາ ຫຼື ເພດານແບບອັດເປັນຊັ້ນ | • Engineering panel (engineered wood panels) | – | – | – |
| | 3.4 ຜະລິດຕະພັນໄມ້ຕໍ່ເປັນເສັ້ນ | 3.4 Finger joint wood | – | – | – |
| | 3.5 ໄມ້ອັດປະສານ, ໄມ້ອັດເຊື່ອມຕໍ່ປະສານ | 3.5 Laminated board, FJL board | – | – | – |
| **44.10** | **4. ຜະລິດຕະພັນ ໄມ້ອັດ** | **4. Plywood** | | | |
| | 4.1 ໄມ້ອັດຈາກຂີ້ເລື່ອຍ ແລະ ຂີ້ກົບ | 4.1 Particle board | – | – | – |
| **44.11** | 4.2 ໄມ້ອັດຈາກເສດໄມ້ບົດ | 4.2 MDF board/ HDF board/OSB board | – | – | – |
| | 4.3 ໄມ້ອັດຈາກໃຍໄມ້ | 4.3 Fiber Board | – | – | – |
| **44.12** | 4.4 ໄມ້ອັດຈາກໄມ້ປອກ | 4.4 Plywood from veneers | – | – | – |
| | 4.5 ໄມ້ອັດບູອກບອດ | 4.5 Block board | – | – | – |
| | 4.6 ໄມ້ອັດປະສານສໍາລັບໜ້າໂຕະ | 4.6 Laminated board for table top | – | – | – |
| | 4.7 ໄມ້ອັດປະສານ | 4.7 Mix plywood | – | – | – |
| | 4.8 ໄມ້ອັດຈາກເສດໄມ້ | 4.8 Particle board | – | – | – |
| | 4.9 ໄມ້ອັດອື່ນໆ | 4.9 Other wood boards | – | – | – |
| **44.14** | **5. ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້** | **5. Wooden handle products** | | | |
| | 5.1 ຂອບສໍາລັບ ຮູບແຕ້ມ, ຂອບຮູບ, ຂອບແວ່ນ | 5.1 Wooden frames for paintings, photographs and mirrors | – | – | – |
| **44.15** | **6. ພາຊະນະບັນຈຸທີ່ເຮັດດ້ວຍໄມ້** | **6. Pallet collar of wood** | | | |
| | 6.1 ໄມ້ ຫີບ ຫຼື ແກັດ | 1. Suitcase Wood | – | – | – |
| | 6.2 ໄມ້ ກ່ອງ ຫຼື ກັບ | 2. Boxes Wood | – | – | – |
| | 6.3 ໄມ້ລັງ | 3. Crates Wood | – | – | – |
| | 6.4 ໄມ້ຖັງໝັກ | 4. Vats Wood | – | – | – |
| | 6.5 ໄມ້ແກນມ້ວນສາຍກາບທຸກຊະນິດ | 5. All wood cabledrums | – | – | – |
| | **6.6 ໄມ້ພະເລດ** | **6. Pallets** | | | |
| | • ໄມ້ໜ້າພະເລດ | • top deckboard | – | – | – |
| | • ໄມ້ຄານພະເລດ | • Stringer | – | – | – |
| | • ໄມ້ຕີນພະເລດ | • Bottom deckboard | – | – | – |
| **44.16** | **7. ອ່າງ ແລະ ຖັງ ເຮັດດ້ວຍໄມ້** | **7. Wooden barrels, staves** | | | |
| | 7.1 ຖັງ | 7.1 Staves | – | – | – |
| | 7.2 ອ່າງ | 7.2 Barrels | – | – | – |
| **44.17** | **8. ດ້າມເຄື່ອງມືທີ່ເຮັດດ້ວຍໄມ້** | **8. Tools, tool handles of wood** | | | |
| | 8.1 ດ້າມຟອຍ ຫຼື ແປງ ແລະ ອື່ນໆ ຮັບໃຊ້ການຜະລິດ | 8.1 Tool handles, broom | – | – | – |
| | 8.2 ຮູບຫຸ່ນເກີບບູດ, ສົ້ນເກີບ | 8.2 Handles, boot or shoe lasts of wood | – | – | – |
| **44.18** | **9. ຜະລິດຕະພັນໄມ້ປະກອບໃນອາຄານ** | **9. Builders' joinery and carpentry of wood** | | | |
| | **9.1 ຊຸດ ປ່ອງຢ້ຽມ** | **9.1 Window set** | | | |
| | • ວົງກົບປ່ອງຢ້ຽມ ສໍາເລັດຮູບ (ຖອດ ຫຼື ບໍ່ຖອດກໍ່ໄດ້) | • Window frames (Knock-down) | – | – | – |

| | | | | | |
|---|---|---|---|---|---|
| | • ບານປ່ອງຢ້ຽມສຳເລັດຮູບ | • Windows | – | – | – |
| | **9.2 ຊຸດ ປະຕູ** | **9.2 Doors set** | | | |
| | • ວົງກົບປະຕູສຳເລັດຮູບ(ຖອດ ຫຼື ບໍ່ ຖອດ) | • Door frames (Knock-down) | – | – | – |
| | • ບານປະຕູ ສຳເລັດຮູບ | • Doors | – | – | – |
| | • ບານປະຕູ ຕູ້ (ຕູ້ເສື້ອຜ້າ,ຕູ້ເຮືອນ ຄົວ) | • Cabinet doors | – | – | – |
| | 9.3 ແຜ່ນໄມ້ມຸງຫຼັງຄາ | 9.3 Wooden shingles | – | – | – |
| | 9.4 ແຜ່ນໄມ້ຮົ້ວ | 9.4 Wooden fences | – | – | – |
| | 9.5 ແຜ່ນໄມ້ປະກອບແບບລາຍໂມເສດ | 9.5 Assembled flooring panel for mosaic floor | – | – | – |
| | 9.6 ຜະລິດຕະພັນໄມ້ ຂອບອັດເປັນຊັ້ນ | 9.6 Multilayer cantlings | – | – | – |
| | 9.7 ຊຸດ ຂັ້ນໄດ | 9.7 Set of staircases | | | |
| | 9.7.1 ແປ້ນຂັ້ນໄດຕົວນອນ | 9.7.1 Horizontal stair board | – | – | – |
| | 9.7.2 ແປ້ນຂັ້ນໄດຕົວຕັ້ງ | 9.7.2 Vertical stair board | – | – | – |
| | 9.8 ຜະລິດຕະພັນໄມ້ລູກຕັ່ງ | 9.8 Balustrades timber products | | | |
| | 9.8.1 ລູກຕັ່ງຮູບຊົງກົມ | 9.8.1 Round balustrade | – | – | – |
| | 9.8.2 ລູກຕັ່ງຮູບຊົງສີ່ລ່ຽມ | 9.8.2 Square balustrade | – | – | – |
| 44.19 | **10. ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້** | **10. Other articles of wood** | | | |
| | 10.1 ຜະລິດຕະພັນໄມ້ທີ່ໃຊ້ເທິງໂຕະອາຫານ, ເຮືອນຄົວ ເຊັ່ນ: ຖ້ວຍ, ຊາມ, ຖາດ, ໂອ່ງ, ຈານ, ໄມ້ກະດ້າມ, ບ່ວງ, ສ້ອມ, ດ້າມມີດ | 10.1 Tableware and kitchenware of wood | – | – | – |
| | 10.2 ຂຽງ | 10.2 Cutting boards | | | |
| | • ຂຽງສີ່ຫຼ່ຽມຍາວ | • Square Cutting boards | – | – | – |
| | • ຂຽງສີ່ຫຼ່ຽມໄມ້ອັດປະສານ | • End Grain Cutting boards | – | – | – |
| | • ຂຽງສີ່ຫຼ່ຽມໄມ້ຊິ້ນດຽວ | • OPC Square Cutting boards | – | – | – |
| | • ຂຽງໜ້າມົນ | • Round Cutting boards | – | – | – |
| 44.20 | **11. ຜະລິດຕະພັນເຄື່ອງຫັດຖະກຳໄມ້ແລະ ເຄື່ອງໄມ້ແກະສະຫຼັກ, ແຜ່ນໄມ້ແກະສະຫຼັກ, ແຜ່ນລາຍປາດ ສະລຸ** | **11. Wooden handicrafts and carving products, carving boards** | | | |
| | 11.1 ແຜ່ນໄມ້ແກະສະຫຼັກແປ້ນແຜ່ນດຽວ | 11.1 Wooden board carving products, | – | – | – |
| | 11.2 ຕໍໄມ້, ປຸດໄມ້ແກະສະຫຼັກ ທີ່ມີການຈົກ, ຄວັດ ແລະ ແກະສະຫຼັກ | 11.2 Wooden spur carving or handicraft | – | – | – |
| | 11.3 ໄມ້ແກະສະຫຼັກ ຫຼື ຄວັດທີ່ມີການແກະສະຫຼັກ | 11.3 Wooden carving or handicraft | – | – | – |
| 44.21 | **12. ເຄື່ອງຂອງອື່ນໆ ທີ່ເຮັດດ້ວຍໄມ້** | **12. other articles of wood** | | | |
| | 12.1 ຜະລິດຕະພັນຂໍເກາະເສື້ອ | 12.1 Wooden clothes hangers | – | – | – |
| | 12.2 ຜະລິດຕະພັນແກນ, ຫຼອດກະສວຍ, ຫຼອດດ້າຍຍິບຜ້າ | 12.2 Cops and bobbins, sewing in thread reels | – | – | – |
| | 12.3 ໄມ້ຈີ້ມແຂ້ວ | 12.3 toothpicks | – | – | – |
| | 12.4 ໄມ້ຖູ່ ເຮັດດ້ວຍໄມ້ເນື້ອແຂງ | 12.4 Chopsticks made of hardwoods | – | – | – |

| | | | | | |
|---|---|---|---|---|---|
| | 12.5 ລູກປັດສຳລັບນັກບວດ, ໄມ້ກ້ານສໍ | 12.5 Prayer beads, pencils | – | – | – |
| | 12.6 ເຄື່ອງດົນຕີ ທີ່ເຮັດດ້ວຍໄມ້ | 12.6 Musical instruments of wood | – | – | – |
| **94.01** | **13. ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້** | **13. Wooden furniture** | | | |
| | 13.1 ຊຸດ ໂຊຟາ ໄມ້, ຫຸ້ມເບາະ ສຳເລັດຮູບທຸກຊະນິດ | 13.1 Sofar | – | – | – |
| | 13.2 ຕັ່ງ ໄມ້, ຫຸ້ມເບາະ ສຳເລັດຮູບທຸກຊະນິດສາມາດແຍກອອກ ຫຼື ປະກອບໄດ້ເລີຍ | 13.2 Wooden chairs (Fixed or knock-down) | – | – | – |
| **94.03** | **14. ເຄື່ອງເຟີນີເຈີອື່ນໆ ແລະ ສ່ວນປະກອບດັ່ງກ່າວ** | **14. Other furniture and parts (knock-down)** | | | |
| | 14.1 ໂຕະໄມ້ທຸກຊະນິດສຳເລັດຮູບສາມາດແຍກອອກ ຫຼື ປະກອບໄດ້ທັນທີ | 14.1 Wooden tables (Fixed or knock-down) | – | – | – |
| | 14.2 ໂຕະໜ້າມົນໄມ້ແຜ່ນດຽວສຳເລັດຮູບ | 14.2 Wooden round table | – | – | – |
| | 14.3 ຕູ້ໄມ້ທຸກຊະນິດສຳເລັດຮູບ ສາມາດແຍກອອກ ຫຼື ປະກອບໄດ້ທັນທີ | 14.3 Wooden cabinets (Fixed or knock-down) | – | – | – |
| | 14.4 ຕຽງໄມ້ສຳເລັດຮູບ ທຸກຊະນິດສາມາດແຍກອອກ ຫຼື ປະກອບໄດ້ທັນທີ | 14.4 Wooden Bed (Fixed or Knock-down) | | | |
| | • ໄມ້ປູພື້ນຕຽງນອນ | • Bed Centre slats | – | – | – |
| | • ຂອບຕຽງນອນ | • Side rail | – | – | – |
| | • ຂາງຕຽງ | • Bed slats | – | – | – |
| | • ຫົວຕຽງ | • Headboard | – | – | – |
| | • ຕີນຕຽງ | • Footboard | – | – | – |
| | • ເສົາຕີນຕຽງ | • Footboard leg | – | – | – |
| | • ເສົາຫົວຕຽງ | • Headboard leg | – | – | – |
| | 14.5 ເຄື່ອງຕົບແຕ່ງອື່ນໆ ທີ່ເປັນເຟີນີເຈີເຮັດດ້ວຍໄມ້ | 14.5 Decorative and furniture of wood | | | |
| | • ເຄື່ອງເຟີນີເຈີໃຊ້ໃນຫ້ອງການ | • Furniture of a kind used in office | – | – | – |
| | • ເຄື່ອງເຟີນີເຈີໃຊ້ໃນຄົວເຮືອນ | • Furniture of a kind used in kitchen | – | – | – |
| | • ເຄື່ອງເຟີນີເຈີໃຊ້ໃນຫ້ອງນອນ | • Furniture of a kind used in bedroom | – | – | – |
| | 14.6 ຜະລິດຕະພັນເຟີນີເຈີ ຈາກຕໍໄມ້ ສຳເລັດຮູບ | 14.6 Furniture of wooden stump | – | – | – |
| | 14.7 ໂຕະໄມ້ທຳມະຊາດແປັນແຜ່ນດຽວສຳເລັດຮູບ | 14.7 Finished wooden table of a big piece of timber | – | – | – |
| | 14.8 ຜະລິດຕະພັນໂລງສົບ ສຳເລັດຮູບ ທີ່ປະກອບເປັນ ແຜ່ນ, ຂື້ນຮູບຊົງ | 14.8 wooden Coffin | – | – | – |
| | 14.9 ຜະລິດຕະພັນຕູບໄມ້ (ເຮືອນນ້ອຍ) | 14.9 wooden Hut | – | – | – |

ລາຍການຜະລິດຕະພັນໄມ້ ສຳເລັບຮູບ ໄດ້ມີຮູບພາບຄັດຕິດຢູ່ໃນເອກະສານຊ້ອນທ້າຍ ທີ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 6 ການກຳນົດ ຂະໜາດ ຜະລິດຕະພັນໄມ້**

ການກຳນົດ ຂະໜາດ ຜະລິດຕະພັນໄມ້ ແມ່ນ ການກຳນົດ ຄວາມໜາ, ກວ້າງ ແລະ ຄວາມຍາວ ຂອງຜະລິດຕະພັນໄມ້ ແຕ່ລະປະເພດ ເພື່ອໃຫ້ການປຸງແຕ່ງ, ການນຳໃຊ້ ແລະ ການຈຳໜ່າຍ ຖືກຕ້ອງຕາມມາດຕະຖານ ທີ່ໄດ້ກຳນົດໄວ້ໃນ ມາດຕາ 3, 4 ແລະ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

ນອກຈາກ ຂະໜາດ ຜະລິດຕະພັນໄມ້ ທີ່ບໍ່ໄດ້ກຳນົດໄວ້ໃນ ມາດຕາ 3, 4 ແລະ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຜູ້ດຳເນີນທຸລະກິດ ກ່ຽວກັບ ການປຸງແຕ່ງໄມ້ ຕ້ອງສະເໜີຫາ ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາ.

**ມາດຕາ 7 ການຂຶ້ນບັນຊີ ຜະລິດຕະພັນໄມ້**

ຜູ້ດຳເນີນທຸລະກິດ ກ່ຽວກັບ ການປຸງແຕ່ງໄມ້ ຕ້ອງຂຶ້ນບັນຊີ ຜະລິດຕະພັນໄມ້ຂອງຕົນ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ຂອງປະເພດ, ຊະນິດ, ຮູບແບບ, ຂະໜາດ, ມູນຄ່າ ແລະ ລັກສະນະ ຂອງຜະລິດຕະພັນໄມ້ ພ້ອມທັງສົ່ງບັນຊີດັ່ງກ່າວໃຫ້ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ທຸກໆ ສາມ (3) ເດືອນ.

**ມາດຕາ 8 ການຢັ້ງຢືນມາດຕະຖານຜະລິດຕະພັນໄມ້**

ຜູ້ດຳເນີນທຸລະກິດ ກ່ຽວກັບ ການປຸງແຕ່ງໄມ້ ຫາກມີຄວາມຕ້ອງການ ຈະຕອບສະໜອງຜະລິດຕະພັນໄມ້ຕາມຄວາມຕ້ອງການຂອງຕະຫຼາດ ໃຫ້ສະເໜີຫາ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເພື່ອຂໍການຢັ້ງຢືນມາດຕະຖານຜະລິດຕະພັນໄມ້ ຕາມແບບພິມ ຫກປມ 06 ຕາມເງື່ອນໄຂສະເພາະຂອງຜະລິດຕະພັນໄມ້ ດັ່ງນີ້:

1. ໃບຢັ້ງຢືນ ມາດຕະຖານຜະລິດຕະພັນໄມ້ທຳມະຊາດ ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາຂອງໄມ້ທຳມະຊາດ ຕາມແບບພິມ ຫຼມຊ 01, ໃບອະນຸຍາດເລື່ອຍໄມ້ ຕາມແບບພິມ ບລມ 02 ແລະ ໃບຢັ້ງຢືນຜະລິດຕະພັນໄມ້ທຳມະຊາດ ຕາມແບບພິມ ຜມຊ 03;
2. ໃບຢັ້ງຢືນ ມາດຕະຖານຜະລິດຕະພັນໄມ້ປູກ ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາຂອງໄມ້ປູກ ຕາມແບບພິມ ຫຼມປ 04 ແລະ ໃບຢັ້ງຢືນ ຜະລິດຕະພັນໄມ້ປູກ ຕາມແບບພິມ ຜມປ 05.

**ມາດຕາ 9 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 29 ຕຸລາ 2024 ເປັນຕົ້ນໄປ.

**ລັດຖະມົນຕີ**

ລິນຄຳ ດວງສະຫວັນ

**ແບບຟອມ ຫຼມຂ 01**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ/ນະຄອນຫຼວງ......................

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ

ຂະແໜງປ່າໄມ້

ເລກທີ................./ປມຂ

ລົງວັນທີ.........................

## ໃບຢັ້ງຢືນ
## ແຫຼ່ງທີ່ມາຂອງໄມ້ ທຳມະຊາດ ເພື່ອສົ່ງອອກ

- ອີງຕາມ ການສະເໜີຂອງໂຮງງານ/ບໍລິສັດ.....................................................................
- ອີງຕາມ..............................................................................................................
- ອີງຕາມ..............................................................................................................

ຂະແໜງປ່າໄມ້ແຂວງ ຂໍຢັ້ງຢືນວ່າ: ແຫຼ່ງທີ່ມາຂອງໄມ້ ທຳມະຊາດ ຈາກ.................................................... ທີ່ນຳເຂົ້າຜະລິດປຸງແຕ່ງຢູ່ໂຮງງານປຸງແຕ່ງໄມ້......................................................ແມ່ນມີເອກະສານປະກອບດ້ານ ແຫຼ່ງທີ່ມາຂອງໄມ້ ທີ່ນຳເຂົ້າຜະລິດປຸງແຕ່ງ ມີດັ່ງນີ້:

1. **ໃບລາຍການຈັດຊັ້ນຄຸນນະພາບ ໄມ້ສະໜາມ II**
   - ສະບັບເລກທີ................, ລົງວັນທີ................., ຈຳນວນ........ທ່ອນ, ບໍລິມາດ...........ແມັດກ້ອນ;
2. **ໃບອະນຸຍາດເຄື່ອນຍ້າຍໄມ້ພາຍໃນ**
   - ສະບັບເລກທີ................, ລົງວັນທີ................., ຈຳນວນ........ທ່ອນ, ບໍລິມາດ...........ແມັດກ້ອນ;
3. **ໃບອະນຸຍາດເລື່ອຍໄມ້**
   - ສະບັບເລກທີ................, ລົງວັນທີ................., ຈຳນວນ........ທ່ອນ, ບໍລິມາດ...........ແມັດກ້ອນ;

❖ ເປັນຮ່ອງໄມ້: ຈາກ...........................................................................................................

❖ ຕົວເລກຫັກລົບ ໃນຄັ້ງນີ້: ຈຳນວນ.............................ແມັດກ້ອນ.

**ຕາຕະລາງລາຍການໄມ້.................ທີ່ໄດ້ວັດແທກຕົວຈິງ**

| ລ/ດ | ຊະນິດໄມ້ | ຂະໜາດ (ຊມ) | | | ຈຳນວນ/ທ່ອນ | ບໍລິມາດ ($ม^3$) | ໝາຍເຫດ |
|---|---|---|---|---|---|---|---|
| | | ໜາ | ກວ້າງ | ຍາວ | | | |
| 01 | | | | | | | |
| 02 | | | | | | | |
| 03 | | | | | | | |
| 04 | | | | | | | |
| ... | | | | | | | |
| ລວມທັງໝົດ: | | | | | | | |

**ແບບຟອມ ຜມຊ 02**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ /ນະຄອນຫຼວງ...........................
ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ
ຂະແໜງປ່າໄມ້

ເລກທີ................../ປມຂ
ລົງວັນທີ..........................

## ໃບຢັ້ງຢືນ
## ຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ

- ອີງຕາມ ການສະເໜີຂອງໂຮງງານ/ບໍລິສັດ...............ສະບັບເລກທີ................ລົງວັນທີ......................
- ອີງຕາມ........................................................................................................................
- ອີງຕາມ........................................................................................................................

ໃນວັນທີ...., ເດືອນ......, ປີ.........., ເວລາ..........ໂມງ, ໄດ້ມີຄະນະກຳມະການກວດກາ ແລະ ຢັ້ງຢືນ ຜະລິດຕະພັນໄມ້ ເພື່ອສົ່ງອອກ, ຊຶ່ງປະກອບດ້ວຍຜູ້ຕາງໜ້າ ດັ່ງນີ້:

1. ທ່ານ.........................................., ຕາງໜ້າ ຈາກ ຂະແໜງການກະສິກຳ ແລະ ປ່າໄມ້;
2. ທ່ານ.................................................., ຕາງໜ້າ ຈາກ ຂະແໜງການອຸດສາຫະກຳ ແລະ ການຄ້າ;
3. ທ່ານ.................................................., ຕາງໜ້າ ຈາກ ຂະແໜງການເງິນ;

**ໄດ້ພ້ອມກັນລົງກວດກາຜະລິດຕະພັນໄມ້ ທຳມະຊາດ** ຂອງໂຮງງານ/ບໍລິສັດ........................................,
ຕັ້ງຢູ່: ບ້ານ..................ເມືອງ.........................ແຂວງ/ນະຄອນຫຼວງ.......................................,
ໂດຍຊ່ອງໜ້າ ທ່ານ.............................., ໃນນາມ..................ໂທລະສັບ..............................,
ມືຖື...................ເພື່ອສົ່ງອອກໄປປະເທດ.................ໂດຍຜ່ານດ່ານສາກົນຂາອອກ:..........................

**ລາຍລະອຽດ ມີດັ່ງນີ້:**

**1. ຂໍ້ມູນຂອງໂຮງງານ/ບໍລິສັດ**

1.1 ໃບທະບຽນວິສາຫະກິດ ເລກທີ............................, ລົງວັນທີ...................................

1.2 ໃບອະນຸຍາດດຳເນີນທຸລະກິດກິດຈະການໂຮງງານ ເລກທີ...................., ລົງວັນທີ....................

1.3 ໃບຈົດທະບຽນ ສັນຍາ ຊື້-ຂາຍໄມ້ທ່ອນ ເລກທີ.........................., ລົງວັນທີ............................

1.4 ໃບຢັ້ງຢືນການມອບຄ່າພັນທະອາກອນໄມ້ທ່ອນ ເລກທີ........................, ລົງວັນທີ.....................

1.5 ໃບລາຍການບັນຊີໄມ້ທ່ອນ ເລກທີ.........................., ລົງວັນທີ.....................................

1.6 ສັນຍາຊື້-ຂາຍ ຜະລິດຕະພັນໄມ້ ເລກທີ......................, ລົງວັນທີ...................................

1.7 ໃບອະນຸຍາດເຄື່ອນຍ້າຍໄມ້ທ່ອນ ຈາກສະໜາມ II ຫາ ສະໜາມ III ເລກທີ........, ລົງວັນທີ.............

1.8 ໃບຢັ້ງຢືນການເສຍອາກອນ (ຜະລິດຕະພັນໄມ້ແປຮູບ, ເຄິ່ງສຳເລັດຮູບ) ເລກທີ............,ລົງວັນທີ...........

2. ຜະລິດຕະພັນໄມ້ທຳມະຊາດ ທີ່ຄະນະກຳມະການໄດ້ກວດກາ ມີລາຍລະອຽດ ດັ່ງນີ້:

| ລ/ດ | ລາຍການຜະລິດຕະພັນໄມ້ | ລະຫັດສິນຄ້າ (HS Code) | | ຊະນິດໄມ້ | ຈຳນວນ | ຫົວໜ່ວຍ | ຂະໜາດ (ຊມ) | | | ບໍລິມາດ ມ$^3$ | ບໍລິມາດ ທັງໝົດ ມ$^3$ | ນ້ຳໜັກລວມ ກລ/ໂຕນ |
|---|---|---|---|---|---|---|---|---|---|---|---|---|
| | | ລະຫັດເຄົ້າ (Heading) 4 ໂຕເລກ | ລະຫັດຍ່ອຍ (Sub-Heading) 8 ໂຕເລກ | | | | ໜາ | ກ້ວາງ | ຍາວ | | | |
| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 |
| 1 | | | | | | | | | | | | |
| 2 | | | | | | | | | | | | |
| 3 | | | | | | | | | | | | |
| 4 | | | | | | | | | | | | |
| 5 | | | | | | | | | | | | |
| 6 | | | | | | | | | | | | |
| 7 | | | | | | | | | | | | |
| 8 | | | | | | | | | | | | |
| 9 | | | | | | | | | | | | |
| ລວມ | | | | | | | | | | | | |

ບໍລິມາດລວມທັງໝົດ ຂຽນເປັນຕົວໜັງສື.........................................................................................................

ລວມມູນຄ່າທັງໝົດ ຂຽນເປັນຕົວໜັງສື.........................................................................................................

3. **ຜະລິດຕະພັນໄມ້ ສວນປູກ ທີ່ໄດ້ລະບຸໄວ້ໃນຕາຕະລາງ ໄດ້ຂົນຂຶ້ນລົດ:**

